__ລັກສະນະທົ່ວໄປ ແລະ ປະໂຫຍດຂອງຖົ່ວດິນ__

ຖົ່ວດິນເປັນພືດລົ້ມລຸກ ມີໝາກເກີດຢູ່ໃນພື້ນດິນ.ເປັນພືດຕະກຸນຖົ່ວທີ່ມີຄຸນຄ່າທາງອາຫານສູງ.ເຊິ່ງປະຊາຊົນມັກໃຊ້ໃນການກິນ ແລະປຸງແຕ່ງອາຫານ,ນ້ຳມັນພືດ, ຢາປົວພະຍາດ. ເປັນພືດປະກອບດ້ວຍນ້ຳມັນ 40 — 60 %ອຸດົມສົມບູນດ້ວຍທາດໂປຼຕີນ 25 — 35 %, ມີວິຕະມິນ B ແລະ ວິຕະມິນ E. ລຳຕົ້ນຍັງໃຊ້ເປັນອາຫານສັດແລະ ເປັນພືດປັບປຸງ

__ລະດູການປູກ ແລະ ລັກສະນະດິນ__

- ຖົ່ວດິນປູກໄດ້ຕະຫຼອດປີ ແຕ່ປູກໄດ້ດີແມ່ນຕົ້ນລະດູແລ້ງ ຄື ທ້າຍເດືອນ 10 ຫຼື ລະດູຝົນທ້າຍເດືອນ 5 ຕົ້ນເດືອນ 6.
- ລັກສະນະດິນ ຖົ່ວດິນ ມັກດິນຊາຍແກມຕົມທີ່ລະບາຍນ້ຳດີ ໂດຍສະເພາະແລ້ວດິນນ້ຳຖ້ວມ ແລະ ດິນແຄມນ້ຳດິນແດງ. ດິນບໍ່ຊຸ່ມເກີນໄປ, ປູກໄດ້ໃນດິນທີ່ມີ Ph 6,5 — 7.

## I. __ແນວພັນ__

ແນວພັນທີ່ໃຊ້ປູກໃນປະຈຸບັນ ມີ 2 ຊະນິດຄື:

- ຊະນິດຕັ້ງຊື່ເໝາະແກ່ການປູກຍາມແລ້ງ, ຍາມຝົນ
- ຊະນິດຕົ້ນເລືອ ເໝາະສຳລັບປູກຍາມແລ້ງ.

ສຳລັບແນວພັນຢູ່ທາດດອກແກ້ວແມ່ນພັນດີສົມຄວນເຊັ່ນ: ພັນຫ້ວຍສົ້ມ,ພັນວຽງຈັນ, ພັນອຸດົມໄຊ 2, ພັນ 80 / ຖດ 5, ພັນດັ່ງກ່າວມີອາຍຸ 120 ຫາ 140 ວັນ.

**ການຕຽມເມັດລົງປູກ**

ແນວປູກຕ້ອງແກະເລືອກເອົາແຕ່ເມັດຕື່ງ ແຕ່ໃຫ້ມີຄວາມງອກບໍ່ຫຼຸດ 90 % ກ່ອນປູກຄວນປະສົມນ້ຳຢາ ເຊັ່ນ: ເຊວິນ 85 % ຫຼື ອອນເດັກໃນອັດຕາ 1g / ແນວຖົ່ວດິນ 1 Kg ນອກນັ້ນປົນຢາກັນເຊື້ອເຫັດທຳລາຍອີກເຊັ່ນ: ຊີລີແຊນ ຫຼື ກັບຕັນໃນອັດຕາ 2g/ ແນວປູກ 1Kg ເພື່ອກັນພະຍາດ ແລະ ແມງໄມ້.

## II. __ການກຽມດິນ__

- ດິນທີ່ຈະປູກຕ້ອງໄຖໃຫ້ເລິກປະມານ 10 — 15 ຊຕມ.
- ຕາກດິນໄວ້ປະມານ 1 ອາທິດຈາກນັ້ນໃຫ້ຄາດ 1 — 2 ຄັ້ງ ຂຶ້ນກັບຄວາມເໝາະສົມ, ເຮັດໃຫ້ດິນຮາບພຽງດີປາສະຈາກຫຍ້າ ຫຼື ເສດເຫຼືອອື່ນໆ.
- ຖ້າລະດູຝົນຕ້ອງຍົກເປັນຄູປູກຢູ່ເທິງຄູ.
- ໃສ່ຝຸ່ນຄອກປະສົມເວລາໄຖຄາດໃນອັດຕາ 1 Kg / 1m$^2$.

## III. __ວິທີການປູກ__

ຄວນປູກເປັນແຖວ,ຂຸດເປັນຂຸມ ແຕ່ລະຂຸມໃສ່ປະມານ 2 — 3 ເມັດ. ຂຸມເລິກປະມານ 2 ຂໍ້ມື. ເມື່ອຕົ້ນໃຫຍ່ຄວນຫຼົກປອນຕົ້ນອອກໃຫ້ເຫຼືອຂຸມລະຕົ້ນກໍ່ພໍ.

- ຖ້າເປັນພັນຕັ້ງຊື່ໃຫ້ປູກໃນໄລຍະ 60 X 30 Cm. ໂດຍໃຊ້ເມັດພັນ 40 — 50 kg / ha.
- ຖ້າພັນເລືອຕາມດິນໃຫ້ປູກໄລຍະຫ່າງ 80 X 30 Cm. ໂດຍໃຊ້ເມັດພັນ 50 — 60 kg / ha.

ຄວນປູກເປັນ 2 ແຖວເຄິ່ງກັນ ເຊິ່ງມີໄລຍະຫ່າງ 25 Cm.

## IV. __ການບົວລະບັດຮັກສາ__

**ການໃສ່ຝຸ່ນ**

ຖົ່ວດິນສາມາດສັງເຄາະເອົາທາດອາຊົດ (N) ຈາກອາ

ກາດມາປຸງແຕ່ງເປັນທາດອາຫານໄດ້ .ແຕ່ກໍ່ຄວນໃຊ້ຝຸ່ນ

- ຝຸ່ນພື້ນເມືອງ: ນຳໃຊ້ຝຸ່ນຄອກ, ຝຸ່ນບົ່ມ ໃສ່ເວລາ ຕຽມດິນໃສ່ໃນອັດຕາ 10 — 20 *T / ha.*
- ຝຸ່ນວິທະຍາສາດ: ຄວນໃສ່ຝຸ່ນ 16 _ 20 _ 00 ໃນອັດ

ຕາ 250 *Kg /ha.* ໃສ່ຮອງພື້ນກ່ອນຄາດສຸດທ້າຍ ສ່ວນການໃສ່ເພີ້ມໃສ່ກ່ອນພືດອອກດອກ 3 — 5 ວັນ ຫຼັງຈາກປູກໄດ້ 4 —5ອາທິດຝຸ່ນທີ່ໃຊ້ປະເພດຢູເຣຍ 46 %ຈຳນວນ 50 *kg/ha*

**ການໃຫ້ນ້ຳ**

ຖ້າສະພາບດິນແຫ້ງແລ້ງຫຼາຍ ຄວນໃສ່ນ້ຳກ່ອນຕຽມດິນປູກ **ຄັ້ງທີ 1 :** ໃສ່ຫຼັງຈາກປູກ 2 — 3 ອາທິດ ຈຳນວນ 250 — 350 $m^3$ / *ha.* **ຄັ້ງທີ 2 :** ໃສ່ຫຼັງຈາກໃສ່ຝຸ່ນເພີ້ມຈຳນວນ 600 — 800 $m^3$ / *ha.* **ຄັ້ງທີ 3 :** ແມ່ນຫ່າງຈາກຄັ້ງທີສອງ2 ອາທິດ ແລະ ຄັ້ງຕໍ່ໆໄປແມ່ນອີກ 2 — 3 ອາທິດ .

**ການເສຍຫຍ້າພວນດິນ**

ເສຍຫຍ້າ 3 ຄັ້ງ ຄວນເສຍຫຍ້າເວລາພືດຍັງນ້ອຍ ຫຼືຫຼັງຈາກປູກ 10— 15 ວັນ . ຄັ້ງທີ 3 ແມ່ນເວລາກ່ອນພືດອອກດອກ 3 — 5 ວັນ( ຄູນຕົ້ນຄັ້ງທີ 2 ) ຫຼື ຫຼັງຈາກປູກແລ້ວ 30 — 40 ວັນ. ໄລຍະພືດຕິດໝາກທຳອິດ ຫາກມີຫຍ້າຫຼາຍກໍ່ຄວນຫຼົກເອົາອອກ.

**ການປ້ອງກັນພະຍາດ ແລະ ແມງໄມ້**

ແມງໄມ້ທີ່ມັກທຳລາຍແມ່ນປະເພດສ້ຽນດິນ, ບົ້ງກິນໃບ ບົ້ງຮຳໃບ ແລະເຈາະລຳຕົ້ນ.

**<u>ການປາບ ແລະ ປ້ອງກັນ :</u>**

ສ້ຽນດິນ ຄວນໃຊ້ຢາຟູຣາດານ 3 % ຫວ່ານໃນອັດຕາ 15 *kg / ha.* ບົ້ງກິນໃບ, ຮຳໃບ ແລະ ເຈາະລຳຕົ້ນຄວນສີດຢາອາໂຊດຣິນນາ ລາໄທອອນ ໃນອັດຕາ 2 — 3 ບ່ວງຕັກແກງ / 20 ລິດ, ໃນ 7 — 10 ວັນ / ຄັ້ງ.

***ໝາຍເຫດ:*** *ຖ້າມີວິທີການໃນການນຳໃຊ້ຢາປາບສັດຕູພືດ (ຖົ່ວດິນ ) ແບບພື້ນເມືອງແມ່ນໃຫ້ນຳໃຊ້ວິທີການດັ່ງກ່າວເພື່ອເປັນການຫຼຸດຜ່ອນການຳໃຊ້ຢາເຄມີ.*

## V. <u>ການເກັບກ່ຽວ</u>

ເລີ້ມເກັບກ່ຽວເມື່ອຝັກແກ່ 60— 70 % ເພື່ອຢາກຮູ້ວ່າຝັກແກ່ນັ້ນຄວນຫຼົກຫຼື ຂຸດຂື້ນມາ ແລ້ວສັງເກດເບິ່ງຝັກ ວ່າເມັດເຕັມດີ, ແກະຝັກອອກຈະເຫັນວ່າເປືອກດ້ານໃນເປັນສີນ້ຳຕານແກ່ ສະແດງວ່າພໍເກັບໄດ້. ກ່ອນເກັບກ່ຽວຄວນເອົານ້ຳເຂົ້າໃສ່ກ່ອນໃຫ້ພໍຊຸ່ມຈຶ່ງຫຼົກ ຫຼື ຂຸດ ແລ້ວ ໃຫ້ຕາກແດດໄວ້ປະມານ 4 — 6ຊົ່ວໂມງຈຶ່ງນຳເອົາມາປົດໝາກ ແລະ ຕາກໄວ້ປະມານ3 — 5 ແດດໃຫ້ແຫ້ງ. ຖ້າຈະໃຊ້ເປັນເມັດພັນບໍ່ຄວນເກັບກາຍ 1 ປີ ແລະ ຄວາມຊຸ່ມຂອງເມັດຕ້ອງມີ 8 — 9 %.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ຂໍ້ແນະນຳ

# ບາງເຕັກນິກ ການປູກຖົ່ວດິນ

ພັດທະນາໂດຍ: ໜ່ວຍງານພັດທະນາຮູບແບບ ແລະ ຝຶກອົບຮົມ
ສະໜັບສະໜູນໂດຍ :
ໂຄງການ ສົ່ງເສີມ ກະສິກຳ (*LEAP*)